VOL. 3



# ຂ່າວ ປະຈຳເດືອນພະຈິກ



Michael Vang

## ແຈ້ງເຕືອນ

1. ນັກຮຽນຄວນນຸ່ງຊຸດກິລາຂອງໂຮງຮຽນຕາມ ຕາຕະລາງທີ່ໄດ້ລະບຸໄວ້
ຜູ້ປົກຄອງສາມາດຕິດຕໍ່ຄູສອນປະຈຳຫ້ອງສຳລັບ ຕາຕາລາງຮຽນຂອງລູກທ່ານ.
2. ສຳລັບ profile ໃນເດືອນນີ້ຜູ້ຮຽນແມ່ນສຸມໃສ່ຫົວຂໍ້ risk-taker! (ໜ້າທີ່ 3)

## ງານທີ່ຈະມາຮອດນີ້

**1.** ວັນທີ **27** ຫາ **28** ເດືອນພະຈິກ ແມ່ນພັກການຮຽນ-ການສອນ (ບຸນທາດຫຼວງ).

**2.** ວັນທີ **4** ເດືອນທັນວາ ພັກການຮຽນ-ການສອນ (ວັນຊາດລາວ)

**3.** ວັນທີ **15** ເດືອນທັນວາ ສະເຫຼີມສະຫຼອງ **Holiday**
(ຈັດກິດຈະກຳພາຍໃນໂຮງຮຽນ ແລະ ຜູ້ປົກຄອງສາມາດເຂົ້າຮ່ວມໄດ້)

**4.** ວັນທີ**18** ເດືອນທັນວາ ຫາ ວັນທີ**5** ເດືອນມັງກອນ ພັກການ-ຮຽນການສອນ (ພັກລະດູໜາວ)

ຄຣິກທີ່ນີ້ສຳລັບ **10 LEARNER PROFILES**

**ພາລະກິດ:**
ພວກເຮົາສ້າງແນວຄິດສາກົນພາຍໃນຊຸມຊົນທີ່ພົວພັນກັນດ້ວຍຫຼາຍພາສາແລະ ສຸມໃສ່ການພັດທະນານັກຮຽນໃຫ້ເກັ່ງຮອບດ້ານ,ຮູ້ຈັກຊ່ວຍເຫຼືອຜູ້ອື່ນ, ມີແນວຄິດເປີດກວ້າງ ແລະ ເປັນຜູ້ຮຽນຮູ້ທີ່ກ້າວໄກ.

**ວິໄສທັດ:**
ວິໄສທັດຂອງພວກເຮົາຄືການພັດທະນາບຸກຄົນໃຫ້ມີຄວາມໝັ້ນໃຈຮອບດ້ານແລະ ກ້າທີ່ຈະສະແດງສັກກະຍະພາບຂອງຕົນເອງອອກມາ.



PYP CANDIDATE SCHOOL
© INTERNATIONAL BACCALAUREATE ORGANIZATION 2018

# RISK TAKER

## ນັກກິລາບານມາເຕະໄດ້ມາຢ້ຽມຢາມນັກຮຽນ DIS

### Michael Vang

Michael Vangແມ່ນຊື່ນັກກິລາທີ່ຢູ່ໃນລຳດັບນັກກິລາບານເຕະມືອາຊີບຂອງໂລກ ແລະ ເປັນນັກກິລາບານເຕະມືອາຊີບຄົນມົ້ງຄົນທຳອິດ Michael Vang ໄດ້ກາຍເປັນແຮງບັນດາໃຈໃຫ້ກັບໄວໜຸ່ມຫຼາຍຄົນຜູ້ທີ່ມີຄວາມໄຝ່ຝັນຢາກເປັນນັກກິລາບານເຕະມືອາຊີບທີດີທີ່ສຸດ ແລະ ເສັ້ນທາງ ຂອງລາວທີ່ຈະກາຍມາເປັນນັກກິລາບານເຕະມືອາຊີບນີ້ບໍ່ແມ່ນເລື່ອງງ່າຍເລີຍ. ລາວໄດ້ຫຼິ້ນກິລາບານເຕະຕັ້ງແຕ່ອາຍຸໄດ້ 5 ປີ ແລະ ອອກຈາກບ້ານເພື່ອໄປຮຽນຢູ່ໂຮງຮຽນກິນນອນ, ຫຼັງຈາກນັ້ນເມື່ອ ອາຍຸໄດ້ 16 ປີ Michael ໄດ້ໄປຫຼິ້ນກິລາບານເຕະຢູ່ປະເທດໂປຕຸເກດ ຫຼັງຈາກນັ້ນໄດ້ກັບຄືນໄປປະເທດອາເມລິກາເພື່ອຫຼິ້ນກິລາບານເຕະ. ໃນຖານະທີ່ເປັນຄົນອາເມລິກາເຊື້ອສາຍມົ້ງ-ລາວ ແລະ ໄດ້ຮັບກຽດ ຖືກເລືອກໃຫ້ເປັນຕົວແທນຂອງປະເທດລາວໃນປີນີ້ໂດຍທີມບານເຕະແຫ່ງຊາດລາວ. ເຖິງວ່າຈະປະເຊີນໜ້າກັບຄວາມທ້າທາຍຫຼາຍຢ່າງ ແຕ່ Michael ແມ່ນຜູ້ທີ່ມີ Risk-taker ແລະ ລາວມີຄວາມເຊື່ອໝັ້ນຢ່າງ ໜັກແໜ້ນວ່າການຮຽນຮູ້ສິ່ງໃໝ່ໆແມ່ນມີຄວາມສຳຄັນຕໍ່ການບັນລຸຜົນ ສຳເລັດໃນທຸກສາຂາ ລວມທັງໂຮງຮຽນອີກດ້ວຍ.

MICHAEL VANG ໄດ້ມາຢ້ຽມຢາມທີ່ໂຮງຮຽນຂອງພວກເຮົາ ແລະ ແບ່ງປັນຄວາມຮູ້ຂອງລາວໃຫ້ກັບນັກຮຽນທີ່ກຳລັງຮຽນ PROFILE ປະຈຳເດືອນນີ້, ເຊິ່ງທັງໝົດນີ້ແມ່ນກ່ຽວກັບຫົວຂໍ້ RISK-TAKER! ດັ່ງທີ່ທ່ານ MICHAEL ຮູ້ຈາກປະສົບການ ຂອງຕົນເອງ ການທີ່ເຮົາປະເຊີນໜ້າກັບຄວາມທ້າທ້າຍແມ່ນມີຄວາມ ເປັນຕາຢ້ານແຕ່ກໍຍັງສາມາດນຳຕົນເອງໄປສູ່ລາງວັນ ທີ່ຍິ່ງໃຫຍ່ໂດຍການເອົາຕົນເອງອອກໄປປະເຊີນ ກັບສິ່ງທ້າທາຍໃໝ່ໆເພາະຈະເຮັດໃຫ້ພວກເຮົາສາມາດຮຽນຮູ້ ແລະ ເຕີບໃຫຍ່ໃນວິທີທີ່ພວກເຮົາບໍ່ເຄີຍ ຄິດວ່າຈະເປັນໄປໄດ້. ເລື່ອງເລົ່າຂອງລາວໄດ້ພິສູດ ໃຫ້ເຫັນເຖິງພະລັງແຫ່ງຄວາມອົດທົນ ແລະ ການເຮັດວຽກໜັກ, ລາວໄດ້ສະແດງໃຫ້ເຫັນ ເຖິງຄວາມທຸມເທ ແລະ ຄວາມຕັ້ງໃຈທຸກສິ່ງທຸກຢ່າງ ກໍຈະເປັນໄປໄດ້. ການເດີນທາງຂອງລາວເປັນ ແຮງບັນດາໃຈໃຫ້ກັບທຸກຄົນທີ່ປະເຊີນກັບ ຄວາມຫຍຸ້ງຍາກ ແລະ ອົດທົນຜ່ານອຸປະສັກ. MICHAEL VANGເປັນແບບຢ່າງທີ່ດີໃຫ້ກັບນັກຮຽນ ຂອງພວກເຮົາ ເຊິ່ງເລື່ອງເລົ່າຂອງລາວໄດ້ເຕືອນ ເຂົາເຈົ້າວ່າການເຮົາປະເຊີນກັບຄວາມທ້າທາຍ ແລະ ການເອົາຕົນເອງອອກຈາກ COMFORT ZONE ເປັນກຸນແຈທີ່ສຳຄັນເພື່ອບັນລຸຄວາມຝັນ ຂອງພວກເຮົາດ້ວຍການກ້າວໄປຂ້າງໜ້າ ແລະ ນັກຮຽນ ຂອງພວກເຮົາທຸກຄົນກໍເຊັ່ນດຽວກັນ ພວກເຂົາ ກໍຈະເຮັດໃຫ້ຕົນເອງເປັນແບບຢ່າງທີດີ ແລະ ສຳເລັດສິ່ງທີ່ຍິ່ງໃຫຍ່ໃນຊີວິດຂອງເຂົາເຈົ້າ.



**Michael Vang's Favorite Quote:**

"ຂ້າພະເຈົ້າຝຶກຝົນມາເປັນເວລາ 4 ປີ ເພື່ອແລ່ນ 9 ວິນາທີ ແລະ ຜູ້ຄົນກໍ່ຍອມແພ້ເມື່ອບໍ່ເຫັນຜົນສຳເລັດພາຍໃນ 2 ເດືອນ"

— Usain Bolt

# ສຳລັບ Profileໃນເດືອນນີ້ນັກຮຽນ ແມ່ນຮຽນກ່ຽວກັບ Risk-taker




## ຜູ້ປົກຄອງຈະຊ່ວຍພັດທະນາໃນຫົວຂໍ້ **Risk-taking** ໃຫ້ກັບ ນັກຮຽນຢູ່ທີ່ບ້ານໄດ້ແນວໃດ?

- ຖ້າຫາກລູກຂອງທ່ານລັງເລທີ່ຈະລອງເຮັດສິ່ງໃໝ່ໆ, ພະຍາຍາມກະຕຸ້ນໃຫ້ເຂົາເຈົ້າລອງເຮັດ ແລະ ຊ່ວຍໃຫ້ເຂົາເຈົ້າຄິດວ່າສິ່ງທີພວກເຂົາລອງເຮັດນັ້ນເຮັດໃຫ້ພວກເຂົາຮູ້ສຶກແນວໃດ.

- ລອງຕັ້ງເປົ້າໝາຍໄລຍະສັ້ນທີ່ມ່ວນຊື່ນໃຫ້ກັບລູກຂອງທ່ານພ້ອມກັບລອງເລືອກກິດຈະກຳທີ່ສາມາດທ້າທາຍພວກເຂົາໄດ້ເລັກນ້ອຍເພາະອາດຈະຊ່ວຍກະຕຸ້ນໃຫ້ພວກເຂົາແບ່ງປັນຄວາມຄິດຂອງເຂົາເຈົ້າຂຶ້ນເລື້ອຍໆພ້ອມກັບຮຽນຮູ້ສິ່ງໃຫມ່ໆ,ລອງອາຫານທີ່ແຕກຕ່າງກັນ,ຫຼິ້ນເກມໃຫມ່,ຫຼື ການອອກໄປຫຼິ້ນຢູ່ຂ້າງນອກກັບຄົນທີ່ເຂົາເຈົ້າບໍ່ເຄີຍໄດ້ໃຊ້ເວລາຢູ່ຮ່ວມກັນດົນມາກ່ອນ,ເຊິ່ງຈະເປັນການມ່ວນຊື່ນ ແລະ ຄົ້ນຫາສິ່ງໃໝ່ໆ!

- ຊ່ວຍໃຫ້ພວກເຂົາເຂົ້າໃຈຄວາມແຕກຕ່າງລະຫວ່າງການລອງເຮັດສິ່ງໃໝ່ໆ ກັບການເຮັດ ກິດຈະກຳທີ່ເປັນອັນຕະລາຍ.

- ຖາມພວກເຂົາວ່າ, "ສ່ວນທີ່ຍາກແມ່ນຫຍັງ?" ເຊິ່ງສາມາດຊ່ວຍລະບຸບັນຫາ ແລະ ຫາແນວທາງແກ້ໄຂຮ່ວມກັນ.

## Risk-takers in Action!


Student lead conference


Morning Announcements


Student lead conference